

ສິ້ນສຽງສະກຸນາ
ໂຮມເລື່ອງສັ້ນສ້າງສັນຈາກປາຍປາກການັກຂຽນໜຸ່ມ

ໂຮມເລື່ອງສັ້ນ

# ສິ້ນສຽງສະກຸນາ

## ຈາກປາຍປາກການັກຂຽນໜຸ່ມ


- ຂຽນໂດຍ : ນັກຂຽນໜຸ່ມ
- ຮູບໜ້າປົກໂດຍ : ພັນນະວັນ ອະນຸລັກ
- ຮູບປະກອບ : ກອງມະນີ ປານວິໄລທອງ
- ຄະນະບັນນາທິການ : ບຸນທັນ ພົງພິຈິດ

  ແລະຄະນະຈັດພິມ : ບຸນທະນອງ ຊົມໄຊຜົນ

  ແສງພູໄຊ ອິນທະວີຄຳ
- ພິສູດອັກສອນ : ກະວິນ ກຽງຄຳຊົນນີ
- ອອກແບບ & ຈັດໜ້າ : ຄຳຫວັນ ດາຣາວົງ
- ພິມທີ່ : ໂຮງພິມ..............
- ຈຳນວນພິມ : 2.000 ເຫລັ້ມ
- ທະບຽນອະນຸຍາດ : 40/ພຈ/24022005
- ອຸປະຖຳໂດຍ : ມູນນິທິໂຕໂຢຕາ

## ຈາກຄະນະບັນນາທິການ ແລະ ຄະນະຈັດພິມ

ຄວາມໄຝ່ຝັນຂອງນັກຂຽນທຸກຄົນ ຄືການໄດ້ນຳເອົາຈິນຕະນະການມາສ້າງເປັນຕົວອັກສອນເລົ່າຖ່າຍທອດຄວາມຮູ້ສຶກນຶກຄິດຂອງຕົນໃຫ້ຜູ້ອື່ນໄດ້ຮັບຮູ້ ແລະ ຄວາມພູມໃຈຂອງນັກຂຽນກໍຄືການໄດ້ເຫັນຜົນງານຂອງຕົນ ໄດ້ຖືກພິມອອກສູ່ສາຍຕາຂອງຜູ້ອ່ານ. ເຖິງແນວໃດກໍດີ ນັກຂຽນຈະເກີດໄດ້ກໍຕໍ່ເມື່ອຜູ້ໃຫ້ໂອກາດ ແລະ ການສະໜັບສະໜູນ.

ປື້ມໂຮມເລື່ອງສັ້ນຫົວນີ້ ແມ່ນຄັດເລືອກມາຈາກຜົນງານການຝຶກຂຽນເລື່ອງສັ້ນຂອງນັກຂຽນໜຸ່ມ ທີ່ໄດ້ເຂົ້າຝຶກອົບຮົມການຂຽນລັກສະນະສ້າງສັນ ຊຶ່ງຈັດຂຶ້ນຢູ່ສະໂມສອນຝຶກອົບຮົມຮ່ວມພັດທະນາ ໃນເດືອນມັງກອນຫາເດືອນມິຖຸນາ ປີ 2003, ອຸປະຖຳໂດຍມູນນິທິ ໂຕໂຢຕາ. ທັງໝົດມີເລື່ອງສັ້ນ 23 ເລື່ອງ ເວົ້າເຖິງບັນຫາສັງຄົມ, ການອະນຸລັກສິ່ງແວດລ້ອມ, ຄວາມຮັກລະຫວ່າງບ່າວສາວ, ຄວາມເອື້ອເຟື້ອອາທອນກັນຢູ່ໃນສັງຄົມ, ຄວາມອະຍຸຕິທຳຢູ່ໃນສັງຄົມ ແລະ ອື່ນໆ.

ຜູ້ເຂົ້າຝຶກອົບຮົມສ່ວນໃຫຍ່ລ້ວນແຕ່ເປັນຜູ້ທີ່ຫາກໍເລີ້ມຂຽນໃໝ່ ຈຳນວນໜຶ່ງ ຫາກໍຂຽນເລື່ອງສັ້ນເປັນເລື່ອງທຳອິດ. ສະນັ້ນເລື່ອງສັ້ນເຫລົ່ານີ້ ບໍ່ຖືວ່າແມ່ນຜົນງານການຂຽນທີ່ມີຄຸນນະພາບທັງໝົດ ບໍ່ວ່າຈະແມ່ນການໃຊ້ສຳນວນພາສາ, ການບັນຍາຍ, ການພັນລະນາ, ການຂຽນຄຳສົນທະນາ, ການວາງໂຄງເລື່ອງ, ການກຳນົດບົດບາດຂອງຕົວລະຄອນ ແລະ ການສ້າງຂໍ້ຂັດແຍ່ງເປັນຕົ້ນ.

ພວກເຮົາຕ້ອງຍອມຮັບນຳກັນວ່າ ນັກຂຽນຄົນໜຶ່ງບໍ່ອາດຈະສ້າງຜົນງານອັນດີເດັ່ນໄດ້ພາຍໃນມື້ໜຶ່ງຍາມດຽວ ຜູ້ທີ່ປະສົບຜົນສຳເລັດ ກໍຄືຜູ້ທີ່ປະສົບຄວາມຫລົ້ມເຫລວມາແລ້ວນັບບໍ່ຖ້ວນ. ດັ່ງຄຳເວົ້າຂອງ Samuel Backette: "Ever tried? Ever failed? No matter. Try again. Fail again. Fail better " (ເຄີຍພະຍາຍາມບໍ່? ເຄີຍຫລົ້ມເຫລວບໍ່? ບໍ່ເປັນຫຍັງ. ພະຍາຍາມຕື່ມ. ຫລົ້ມເຫລວ ແຕ່ໄດ້ດີກວ່າເກົ່າ). ສະນັ້ນໃຫ້ຜູ້ອ່ານຖືວ່ານີ້ແມ່ນເລື່ອງສັ້ນເພື່ອໃຊ້ເປັນກໍລະນີສຶກສາ ເປັນແນວທາງປັບປຸງການຂຽນຂອງນັກຂຽນໜຸ່ມເຫລົ່ານີ້ໃຫ້ດີຂຶ້ນໃນອະນາຄົດ.

**ຄະນະບັນນາທິການ & ຄະນະຈັດພິມ**

*ບຸນທັນ ພົງພິຈິດ*
*ບຸນທະນອງ ຊົມໄຊຜົນ*
*ແສງພູໄທ ອິນທະວົງຄຳ*

# ສາລະບັນ


| | | | |
|---|---|---|---|
| 1. | ຈຳເລີຍສັງຄົມ | ໜ້າ | 01 |
| 2. | ອະດີດທີ່ຝັງໃຈ | ໜ້າ | 07 |
| 3. | ດອງໃໝ່ | ໜ້າ | 16 |
| 4. | ພັດພາກຈາກລາ | ໜ້າ | 23 |
| 5. | ເປັນເພາະຮັກ | ໜ້າ | 26 |
| 6. | ແມວໂພງ | ໜ້າ | 33 |
| 7. | ທາຍາດຮຸ່ນສຸດທ້າຍ | ໜ້າ | 41 |
| 8. | ລະຄອນຊີວິດ | ໜ້າ | 48 |
| 9. | ໂສກນາດຕະກຳຊຽງດ້ວງ | ໜ້າ | 52 |
| 10. | ໝູເສຍ | ໜ້າ | 56 |
| 11. | ຈະຄອຍ | ໜ້າ | 60 |
| 12. | ບົດຮຽນຊີວິດ | ໜ້າ | 65 |
| 13. | ຖືພາມື້ດຽວ | ໜ້າ | 71 |
| 14. | ສິ້ນສຽງສະກຸນາ | ໜ້າ | 77 |
| 15. | ຖະໜົນເໜັບ | ໜ້າ | 81 |
| 16. | ກວ່າຈະຮູ້ | ໜ້າ | 85 |
| 17. | ລື່ມຄວາມ | ໜ້າ | 92 |
| 18. | ລາງວັນຊີວິດ | ໜ້າ | 96 |
| 19. | ເມື່ອທົ່ງນາຂາດຄວາຍ | ໜ້າ | 104 |
| 20. | ສັນຍາທີ່ຖືກລືມ | ໜ້າ | 110 |
| 21. | ຄວາມພູມໃຈ | ໜ້າ | 121 |
| 22. | ທວງຄຳສັນຍາ | ໜ້າ | 129 |
| 23. | ລາງວັນຂອງຄວາມດີ | ໜ້າ | 139 |

# ຈຳເລີຍສັງຄົມ

*ສ. ພວງດອກຊ້ອນ*

" ຄຳກ້າ ຖືກຕຳຫລວດລາກຄໍໄປເຂົ້າຄຸກແລ້ວ, ດິນ, ເຮືອນ, ລົດ ແລະ ຊັບສິນທັງໝົດຖືກລັດອາຍັດໄວ້, ນາງດາ ເມຍຂອງຄຳກ້າຮ້ອງໄຫ້ແທບນ້ຳຕາຊິເປັນເລືອດ ".

ຂ່າວດັ່ງກ່າວສະເທືອນນ້ຳ, ສະເທືອນບົກ ພໍປານກັບຕຶກການຄ້າໂລກທີ່ນະຄອນນິວຢອກຖືກວິນາດສະກຳນີ້ ເຖິງວ່າບໍ່ໄດ້ຮັບການເຜີຍແຜ່ຜ່ານພາຫະນະສື່ມວນຊົນ ແຕ່ຍ້ອນຄຳກ້າໄດ້ກາຍເປັນ " ຈຳເລີຍຂອງສັງຄົມ " ມາເປັນເວລາດົນແລ້ວ ແລະ ເຂົາກໍຕົກເປັນເປົ້າສາຍຕາຂອງຄົນໃນກະຊວງກ່ຽວກັບຄວາມລ້ຳລວຍທີ່ຜິດປົກກະຕິ. ສະນັ້ນ, ມັນຈຶ່ງບໍ່ແປກຫຍັງກັບເລື່ອງລາວຂອງເຂົາໄດ້ກະຈາຍເຂົ້າສູ່ຫູຂອງຄົນໄວວາຄືກັນກັບໄຟລາມປ່າໃນຍາມແລ້ງ.

ຂ້ອຍຫາກໍກັບມາແຕ່ເຮັດວຽກຢູ່ຮາກຖານເມື່ອວານນີ້, ແຕ່ພໍມາຮອດເຮືອນປັບ ແທນທີ່ວ່າແມ່ອີນ້ອຍຊິຖາມຂ່າວຄາວເລື່ອງຄວາມສຸກທຸກຂອງຂ້ອຍກ່ອນ ແຕ່ຊ້ຳພັດເລົ່າຂ່າວດັ່ງດັ່ງກ່າວນີ້ແຫລະໃຫ້ຂ້ອຍຟັງກ່ອນ.

" ມັນກໍສົມຄວນແລ້ວລະ ! ພໍ້ວໍ້ຂຶ້ນເຮັດໜ້າທີ່ໃໝ່ບໍ່ພໍເທົ່າໃດກໍລ້ຳລວຍຂຶ້ນດົ່ງໆພໍປານນ້ຳຂອງຂຶ້ນໃນຍາມຝົນ. ຍຸກນີ້ຜູ້ໃດສໍ້ລາດບັງຫລວງແມ່ນໄປບໍ່ລອດດອກ, ບ້ານມີຂື່ ເມືອງມີແປ. ປະ



ເທດຊາດມີລັດຖະທຳມະນູນ, ມີລະບຽບກົດໝາຍຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ບໍ່ທ່ອນຈະປະປ່ອຍໃຫ້ຄົນບໍ່ດີລອຍເລືອນໄດ້ຢ່າງສະບາຍດອກ " ຂ້ອຍສະຫລຸບຄືແນວນັ້ນ, ພາຍຫລັງທີ່ຜູ້ເປັນເມຍເລົ່າເລື່ອງຈົບ.

ກ່ອນນີ້ 5 ປີ, ຂ້ອຍກັບຄຳກ້າເຄີຍເປັນເພື່ອນຮັກ, ເພື່ອນແພງ, ເປັນທັງເພື່ອນຮ່ວມອາຊີບ, ຮ່ວມອຸດົມການ ແລະ ກໍຮ່ວມເຮືອນທ້ອງແຖວຫລັງດຽວກັນ.

ບ້ານເກີດເມືອງນອນຂອງຂ້ອຍກັບຄຳກ້າ ແມ່ນຢູ່ທາງແດນໃຕ້, ເປັນແຂວງດຽວກັນ ແຕ່ຢູ່ຕ່າງເມືອງ. ແຕ່ເຖິງແນວໃດກໍດີ, ນິໄສໃຈຄໍຂອງຂ້ອຍ ແລະ ເຂົາກໍເຂົ້າກັນດີພໍປານເລກ 11.

ເມື່ອຄັ້ງຍັງອາໄສຢູ່ເຮືອນທ້ອງແຖວນຳກັນ ແລະ ເຮັດວຽກຢູ່ແນວຮົບວັດທະນະທຳ-ແນວຄິດນຳກັນນັ້ນ, ຄອບຄົວຂອງຂ້ອຍ ແລະ ຄຳກ້າ ເກືອບຖືໄດ້ວ່າເປັນຄອບຄົວອັນໜຶ່ງອັນດຽວກັນ. ເວລາຫວ່າງວຽກວັນເສົາ, ວັນອາທິດ ສອງສ່ຽວພວກຂ້ອຍເຄີຍແບກແຫຂັດຂ້ອງລົງໜອງ, ລົງບຶງ ເພື່ອຊອກປູ ຫາປາມາໃສ່ພາແລງພາງາຍ ລົດຈັກອີຮ້າງ ຮອນດາ 50 ຊີຊີ ຂອງຂ້ອຍນັ້ນລະເປັນຜູ້ກິ່ງຫລັງບັນທຸກເອົາສອງສ່ຽວໄປທຸກຈອກທຸກແຈ ບ່ອນທີ່ມີກຸ້ງ ມີປາພໍໄດ້ຊອກໄດ້ຫາ.

ຍາມເພິ່ນເຮັດບຸນ, ເຮັດສິນ, ຂ້ອຍ ແລະ ຄຳກ້າ ກໍປ່ຽນອາຊີບຈາກຊາວປະມົງມາເປັນພໍ່ຄ້າສະໝັກຫລິ້ນຂາຍເຂົ້າໜົມ, ຢາສູບ, ນ້ຳຫວານ, ໃບໝາກໂມພໍມີລາຍຮັບເລັກໆນ້ອຍໆຈຸນເຈືອຊີວິດຄອບຄົວ.

ແລງມື້ໜຶ່ງ, ຂະນະທີ່ຂ້ອຍ ແລະ ຄຳກ້າ ນັ່ງເຫຍັ້ນເຫລົ້າຂາວແກ້ມປີ້ງເອັນຢູ່ກ້ອງກົກໝາກຕາກົບໜ້າຫ້ອງເຮືອນຂອງຂ້ອຍນັ້ນ ຄຳກ້າຍົກບັນຫາຂຶ້ນມາສົນທະນາກັບຂ້ອຍວ່າ: " ເຮີຍ ! ບຸນທຳ...ເຮັດແນວໃດຫວະຈຶ່ງຊິມີເງິນມີຄຳພໍໃຊ້ພໍຈ່າຍຄືໝູ່, ຄອງຖ້າແຕ່ເງິນເດືອນຄືຊູ່ມື້ນີ້ມັນໄປບໍ່ລອດແລ້ວເດນີ້ນ່າ ".

ຂ້ອຍຫາຍໃຈຢ້ຳປີ້ງເອັນທຍາບາງໆຢູ່ຄາວໜຶ່ງ ກືນລົງຄຳແລ້ວຈຶ່ງອອກຄຳເຫັນ: " ເຮົາກໍບໍ່ຊ່າງຊິວ່າຄືກັນ, ໃນເງື່ອນໄຂຄືພວກເຮົາເຈົ້າຂ້ອຍນີ້, ບໍ່ມີທີນທາງອື່ນໃດດອກ, ນອກຈາກຈະຕ້ອງຍຶກສູງນ້ຳໃຈປະຢັດມັດທະຍັດ, ດຸໝັ່ນເພີ້ມພູນຜະລິດຜົນ ສ້າງເສດຖະກິດຄອບຄົວເທົ່ານັ້ນ "

ຈຶ່ງຕາໂລ້ງໆຂອງໝໍເບິ່ງຂ້ອຍ, ເຂົາແກວ່ງຫົວຊ້າໆແລ້ວເວົ້າຂຶ້ນວ່າ: " ເຮົາເຫັນແລ້ວນາອັນປູກາງ ຝັງໆ ບໍ່ມີໃຜຈະກາຍເປັນເສດຖີໄດ້ດອກ ເຮົາຄິດວ່າ ຖ້າຢາກລ້ຳລວຍມີແຕ່ປ່ຽນໜ້າທີ່ໄປເຮັດອັນອື່ນທີ່ພໍມີຊ່ອງຫວ່າງໄດ້ເກັບເລັກເກັບນ້ອຍຄືຊິດີເວີຍ ! ໂຕເຫັນບໍ ? ພວກທີ່ເຮັດນຳວັດຖຸເງິນຄຳເຊັ່ນວ່າ: ການເງິນເອີ່ຍ, ເຊື້ອໄຟເອີ່ຍ ຄືແນວນີ້ແມ່ນບໍ່ມີໃຜຕຶກອັນດັບ " ໂຕຢ່າເຝືອນຫາກັບມີເລີຍນ່າ, ລວຍຍ້ອນສໍ້ໂກງຂອງລັດຂອງຫລວງຄືແນວນັ້ນມັນບໍ່ດີໃດ, ມັນຜິດກົດໝາຍບ້ານເມືອງ ໂຕຮູ້ບໍ ? " ຂ້ອຍຕັກເຕືອນໝໍ.

" ນີ້ແຫລະ ! ເວົ້ານຳພະນັກງານປະຕິວັດຜູ້ຊື່ສັດຄືໂຕມັນກໍເປັນແນວນີ້ສະເໝີ ສະໄໝນີ້ຄົນເຮົາເຮັດຫຍັງກໍກິນນຳອັນນັ້ນ ງິມນຳແຕ່ເຈັ້ຍແຕ່ສໍຄືພວກເຮົາລະແມ່ນທຸກຈົນຮອດມື້ກະດູກເຂົ້າໄຫພຸ້ນລະ ".

ຂ້ອຍຄິດວ່າ ທຸກຄຳເວົ້າທີ່ຄຳກ້າລົມກັບຂ້ອຍໃນມື້ນັ້ນ, ມັນເປັນພຽງຄຳເວົ້າທີ່ລະບາຍອອກ ຍ້ອນພິດເຫລົ້າ ເປັນໄມ້ງົດເທົ່ານັ້ນ, ບໍ່ຄິດເລີຍວ່າ ເດືອນຕໍ່ມາ ໝໍກໍໄດ້ສະເໜີໄປຮຽນວິຊາສະເພາະການເງິນ ແລ້ວຈາກນັ້ນ, ຄຳກ້າ ກໍໄດ້ມາເຮັດໜ້າທີ່ການງານອັນໃໝ່, ມີໂອກາດ ແລະ ຊ່ອງທາງໃໝ່ຕາມທີ່ໝໍໄດ້ວາດແຕ້ມເອົາໄວ້.

ນັບແຕ່ໄດ້ມາເຮັດໜ້າທີ່ເປັນການເງິນຢູ່ໃນກະຊວງ, ຄຳກ້າໄດ້ສົມຮູ້ຮ່ວມຄິດກັບໝູ່ຄູ່ເພື່ອຍັກຍອກ, ສໍ້ໂກງເອົາເງິນຄຳຂອງລັດເປັນຫລາຍຮູບຫລາຍວິທີ ນັບແຕ່ການປອມແປງຕົວເລກບັນຊີການເງິນ, ກັກຕຸນ ແລະ ນຳເອົາເງິນນັບເປັນຫລາຍຮ້ອຍລ້ານໄປ

ໝູນນອກລະບົບ ເພື່ອສ້າງຜົນປະໂຫຍດໃຫ້ແກ່ຕົນເອງ ເຮັດໃຫ້ການເບີກຈ່າຍເງິນເດືອນໃນກະຊວງຊັກຊ້າ, ເງິນເດືອນກາຍເປັນເງິນງວດ ງົບປະມານຮັບໃຊ້ວຽກງານແຕ່ລະດ້ານກໍຕອບສະໜອງບໍ່ທ່ວງທັນກັບເວລາ ຍິ່ງໄປກວ່ານັ້ນ, ຄຳກ້າ ແລະ ພັກພວກຍັງຫລັບຫູຫລັບຕາຍັກຍອກເອົາກ້ອນເງິນງົບປະມານກົມກອງ ໂດຍຫາວິທີຫລອກລວງກົມກອງນັ້ນວ່າ: ງົບປະມານທີ່ສ້າງຂຶ້ນມານັ້ນ, ຂັ້ນເທິງບໍ່ມີເງິນຕອບສະໜອງໃຫ້ ແລະ ອື່ນໆ.

ການເວລາຜ່ານໄປພຽງແຕ່ 1 ປີ, ຄຳກ້າກໍສາມາດປົດປ່ອຍຕົນເອງອອກຈາກຣິມຊາຍຄາເຮືອນຫ້ອງແຖວ ລົດຖີບອີ້ຣ້າງ " ສະແຕນດາດ " ກໍຖືກປ່ຽນແທນດ້ວຍລົດກະບະ 4 ປະຕູ ແອວທີ່ເຄີຍຂັດຂ້ອງໄປຫາປູຫາປາ ມາບາດນີ້ກໍແມ່ນໂທລະສັບມືຖືຍີ່ຫໍ້ໂນເກຍ ເຂົ້າມາແທນທີ່, ຄວາມລຳລວຍຜິດປົກກະຕິຂອງຄຳກ້າ ໄດ້ເຮັດໃຫ້ເຂົາຕົກເປັນ " ຈຳເລີຍສັງຄົມ " ມາຕັ້ງແຕ່ເວລານັ້ນ, ສາຍຕາທຸກຄູ່ຂອງຄົນໃນກະຊວງຕ່າງກໍຈ້ອງມອງມາຍັງເຂົາຢ່າງຈິດຈໍ່ ຂ້ອຍເອງກໍເຫັນວ່າ ຄຳກ້າ ເຮັດໂລດໂຜນເກີນໄປແລ້ວ, ຊີວິດຂອງໝໍທັງໝົດກໍປ່ຽນແປງໄປແບບໜ້າມືເປັນຫລັງມື ແມ່ນແຕ່ຄວາມສຳພັນລະຫວ່າງຂ້ອຍ ແລະ ຄຳກ້າ ກໍເກືອບຈະເວົ້າໄດ້ວ່າຖືກຕັດຂາດໄປຢ່າງສິ້ນເຊີງ ຈື່ໄດ້ວ່າ ຂ້ອຍໄດ້ມີໂອກາດລົມກັບຄຳກ້າເປັນເທື່ອສຸດທ້າຍຢູ່ໃນຫ້ອງການບ່ອນຂ້ອຍເຮັດວຽກນັ້ນເອງ, ມື້ນັ້ນ ຈັກແມ່ນວ່າພະຍຸທ່າໃດບຸພັດເອົາໝໍເຂົ້າໄປໃນຫ້ອງຂ້ອຍ.

" ເປັນແນວໃດເວີຍ ບຸນທຳ ? "

ໝໍທັກທາຍຂ້ອຍຊຶ່ງສີໜ້າເບີດໆ...

" ກໍຄືເກົ່າຫັ້ນລະ ! ໂຕມັນຄົນຫົວອ່ອນ, ຍາມໃດກໍງົມນຳແຕ່ເຈັ້ຍແຕ່ສໍ, ເຮັດແນວໃດຊິໄປທັນໝູ່ເບາະ ? " ໝໍເລີ່ມແທງກະດອງໃຈຂອງຂ້ອຍ.

" ຈະອ່ອນ ຫລື ແຂງແນວໃດນັ້ນ, ເຮົາບໍ່ຖືສຳຄັນດອກ ແຕ່ເຮົາຈະບໍ່ຍອມທໍລະຍົດຕໍ່ແນວຄິດ ແລະ ອຸດົມການຂອງຕົນ

ເອງດອກ. ຊີວິດຄົນເຮົາມີໄວ້ ບໍ່ແມ່ນເພື່ອຫາຍໃຈເຂົ້າອອກເທົ່ານັ້ນ, ແຕ່ມັນຍັງຕ້ອງການກຽດ ແລະ ສັກສີ... ສິ່ງສຳຄັນລະແມ່ນໃນຊີວິດນັ້ນຕ້ອງໄດ້ມີສ່ວນອຸທິດໃຫ້ແກ່ຊາດ ແລະ ສັງຄົມ ການສ້າງຄວາມສຸກຢູ່ບົນບວກເລືອດ ແລະ ຢາດນ້ຳຕາຂອງປະຊາຊົນນັ້ນ ມັນເປັນກິດຈະວັດຂອງພວກຄົນທີ່ບໍ່ແມ່ນຄົນເທົ່ານັ້ນລະ " ຂ້ອຍເລີ່ມສາທະຍາຍກັບໝໍ.

" ບຸນທຳ ! ໂຕຍັງຮັກສາທາດປະຕິວັດໄດ້ດີຢູ່ເນາະ ! ແຕ່ຢ່າລືມວ່າ ອຸດົມການນັ້ນ ມັນກິນກັບເຂົ້າບໍ່ໄດ້ ເກີດເປັນຄົນຊາດດຽວກໍ່ຊອກຫາຄວາມສຸກໃສ່ຕົນເອງແດ່ລະບໍ ! ".

" ຄວາມສຸກທີ່ໄດ້ມາຈາກຢາດເຫື່ອແຮງ ແລະ ໄດ້ມາຈາກການຂູດເນື້ອເຖືອໜັງປະຊາຊົນໃນຍາມປະເທດຊາດຕົກທຸກໄດ້ຍາກຄືແນວນີ້ ເຮົາບໍ່ສາມາດຈະຊົມໃຊ້ຄວາມສຸກນັ້ນລົງຄໍໄດ້ດອກໃນຖານະທີ່ເປັນເພື່ອນກັນ, ຢ່າຊິພະຍາຍາມບົ້ນເລີກໃນເສັ້ນທາງນັ້ນເລີຍ, ເມື່ອໃດສະພາບສຸກງອມແລ້ວ ໂຕຊິໄປລອດຍາກໃດເຊື່ອເຮົາເທາະ ! ".

ໝໍປ່ອຍສຽງຫົວຄ່ອຍໆອອກມາໜ້ອຍໜຶ່ງ ແລ້ວກໍ່ຕອບເປັນປະໂຫຍກສຸດທ້າຍ " ບຸນທຳ ! ໂຕບໍ່ຕ້ອງເປັນຫ່ວງເຮົາດອກ, ເຮົາມີເສື້ອເກາະປ້ອງກັນຕົວດີແລ້ວ...

ຈົນມາຮອດເວລານີ້, ເວລາທີ່ກົດໝາຍບ້ານເມືອງໄດ້ລົງໂທດຄວາມດີຂອງໝໍ ຂ້ອຍກໍ່ບໍ່ໄດ້ມີໂອກາດເວົ້າລົມກັບຄຳກ້າແມ່ນແຕ່ຄັ້ງດຽວເລີຍ ຂ້ອຍຄິດວ່າ ຢາກຈະໄປຢາມເຂົາຢູ່ຄ້າຍຄຸມຂັງ ແຕ່ຂ້ອຍຄິດໄປຄິດມາກໍ່ຢ້ານຄຳກ້າເວົ້າໃສ່ວ່າ: " ມາເຮັດຫຍັງຄົນຫົວອ່ອນ ".

" ເອີລະ ! ບໍ່ໄປດີກວ່າ ປ່ອຍໃຫ້ໝໍໄປຕາມໂຊກຊະຕາກຳທີ່ໄດ້ເລືອກເອົານັ້ນເທາະ ".

# ອະດີດທີ່ຝັງໃຈ

✍ *ພ. ແກ້ວບຸນມາ*

ທ້າຍລະດູແລ້ງ ປີ 1969 ເປັນປີທີ່ຈັກກະພັດອາເມລິກາໄດ້ສຸມກຳລັງພົນ ແລະ ອາວຸດເຂົ້າຖະຫລົ່ມເຂດປົດປ່ອຍແຂວງຊຽງຂວາງ, ເຂົາປະຕິບັດຍຸດທະສາດສົງຄາມພິເສດເພີ່ມທະວີລະດັບສູງເອີ້ນວ່າ: " ບັ້ນຣົບກູ້ກຽດ " ເຂົາປະຕິບັດຄຳຂວັນສາມກ້ຽງ : ປາບກ້ຽງ, ຈູດກ້ຽງ, ຂ້າກ້ຽງ. ໃນສະພາບສົງຄາມອັນດຸເດືອດເອົາເປັນເອົາຕາຍເຊັ່ນນັ້ນ ຄອບຄົວຂອງຂ້ອຍກໍແມ່ນໜຶ່ງທີ່ຕົກຢູ່ໃນຊະຕາກຳເໝືອນປະຊາຊົນຊາວຊຽງຂວາງໄດ້ຮັບຢູ່.

ມື້ໜຶ່ງຂອງເດືອນກໍລະກົດ, ຂ້ອຍເຫັນລົດກອມມັງກາທີ່ແຊມດ້ວຍພົດໄມ້ແລ່ນມາຈອດຢູ່ຕໍ່ໜ້າຖ້ຳບ່ອນທີ່ຂ້ອຍຫລົບໄພຢູ່, ມີທະຫານສອງຄົນໃນຊຸດສີຂຽວ ອ້າຍນ້ອງເພື່ອນບ້ານຫວຽດນາມໃສ່ໝວກ ແລະ ຜ້າຈ້ອງສີຂຽວມັດຄໍ ຍ່າງມຸ່ງໜ້າເຂົ້າມາໃນຖ້ຳ (ລຸ້ງ) ຂອງພວກຂ້ອຍ ພໍ່ຟ້າວຍ່າງໄປຈັບມື ແລະ ໂອບກອດດ້ວຍຄວາມສະໜິດສະໜົມ ຄືກັບວ່າອ້າຍນ້ອງຮ່ວມອຸທອນ ທີ່ຈາກກັນເປັນເວລາດົນນານ.

" ມາແຕ່ດ້ານຮົບມື້ໃດ ? ແຂງແຮງດີບໍ່ ? "

" ສະພາບຢູ່ສະໜາມຮົບເປັນແນວໃດ ? "

" ໄດ້ຍິນວ່າກອງທັບເຮົາໄດ້ຂັບໄລ່ສັດຕູມາຮອດລາດບວກຊັ້ນຫວາ ? "



" ມື້ວານນີ້ ພວກເຮົາກໍຈັບໄດ້ນັກສືບເຊ-ອີ-ອາ ຂອງອາເມລິກາບັກໜຶ່ງ ທີ່ໂດດຈ້ອງຜິດເປົ້າ, ພໍດີມາຕົກຄ້າງຢູ່ປາຍໄຜ່ຕີນຖ້ຳພຸ້ນ ".

ປະກົດວ່າ, ພໍ່ເພິ່ນທິວກະທາຍຄຳຖາມເອົາແທ້ໆ ຈົນບໍ່ປະໃຫ້ອາວໄດ້ຕອບ, ພ້ອມທັງດຶງແຂນອາວເຂົ້າມາຖ້ຳ, ອາວຍື່ນເຂົ້າໜົມ (ແບັງໂຄ) ໃຫ້ພວກຂ້ອຍເກືອບບໍ່ທັນ, ເມື່ອໄດ້ເຂົ້າໜົມແລ້ວພວກຂ້ອຍ ແລະ ນ້ອງກໍບໍ່ເຂົ້າໃຈວ່າຜູ້ໃຫຍ່ເພິ່ນປຶກສາຫາລືວຽກຫຍັງແດ່ນຳກັນ. ຈົນຮອດພາເຂົ້າແລງ ຍິນກໍເວົ້ນມາຖົ່ມລະເບີດຕະຫລອດມື້ຕະຫລອດຄືນ. ຄືນນັ້ນ ອາວຮຸ່ງ ແລະ ປ້ອງກັນເພິ່ນໄດ້ຄ້າງຄືນຢູ່ກັບຖ້ຳພວກຂ້ອຍ, ຂ້ອຍດີໃຈຫລາຍເພາະໄດ້ມີໂອກາດຟັງອາວເລົ່າເລື່ອງ. ພາຍຫລັງແລ້ວພາເຂົ້າແລງ ສາມເອື້ອຍນ້ອງພວກຂ້ອຍກໍນັ່ງຈຸ້ມຄືດັ່ງຫລາຍຄັ້ງທີ່ອາວຮຸ່ງມາຢາມ, ອາວເລົ່ານິທານ ແລະ ຮ້ອງເພັງມ່ວນຫລາຍ.

ຂ້ອຍມັກຟັງຫລາຍກວ່າໝູ່ແມ່ນເລື່ອງວິລະກຳຂອງຫວຽດນາມສືບລັບ, ເລື່ອງສີທອງວິລະຊົນ, ວິລະຊົນຫວຽດວັນໂຈ້ຍ ແລະຫລາຍໆເລື່ອງອີກ... ພໍ່ ແລະ ອາວເປັນຄົນມີພອນສະຫວັນເລົ່ານິທານ, ຂ້ອຍຈຳໄດ້ສະເໝີວ່າເມື່ອພໍ່ ແລະ ອາວກັບຈາກສະໜາມຮົບ, ຂ້ອຍກໍມີໂອກາດໄດ້ຟັງນິທານ, ຄືນນັ້ນ ບໍ່ຮູ້ວ່າເດິກປານໃດຈົນພວກຂ້ອຍນອນຫລັບປະ ພໍຕື່ນເຊົ້າມາກໍບໍ່ເຫັນພໍ່ ແລະ ອາວແລ້ວ ຂ້ອຍຖາມແມ່ວ່າ:

" ແມ່ ! ພໍ່ກັບອາວຮຸ່ງໄປໃສ ? "

" ພຸ້ນລະ, ພວກລູກນັ້ນຕື່ນສວາຍຫລາຍ ພໍ່ກັບອາວກໍອອກໄປວຽກປະລະບໍ ! " ແຕ່ຂ້ອຍກໍບໍ່ໄດ້ຖາມຕໍ່ວ່າພໍ່ໄປໃສແທ້, ຮູ້ພຽງແຕ່ວ່າ ຄືງແມ່ນອາວຮຸ່ງມານຳເອົາ ເພາະມີວຽກຮົບດ່ວນຢູ່ສະໜາມຮົບ, ມື້ນັ້ນ ຈົນຄ່ຳກໍບໍ່ເຫັນພໍ່ກັບມາ, ຈາກມື້ໜຶ່ງເປັນສອງ-ສາມມື້-ສີ່ມື້ກໍບໍ່ເຫັນພໍ່ກັບມາ, ຂ້ອຍຮູ້ວ່າສະພາບເຄັ່ງຮ້ອນ ແຕ່ລະມື້ຍິນສັດ

ຕູໄດ້ຂຶນລະເບີດມາຖິ້ມໃສ່ແຕ່ເຊົ້າເຫົ້າຄ່ຳ, ຜູ້ໃຫຍ່ຄືຊຸມແມ່, ແມ່ປ້າ, ນ້າສາວຢູ່ໃນກົມກອງ ກໍຈະເຫັນພວກເພິ່ນເວນຍາມກຳປືນປ້ອງກັນປາກຖ້ຳ, ສ່ວນເດັກນ້ອຍພວກຂ້ອຍກໍພາກັນໝົ້ນຂົດຢູ່ໃນຮູຖ້ຳ, ບໍ່ເຫັນຮອດໝອກ, ຮອດແດດ, ຖ້ຳຫລືບໄພກໍແມ່ນມັນເປື້ອນ, ຂີ້ວຂີ້ເຈ້ຍ ຂີ້ນົກ, ບາງຄັ້ງກໍພົ້ງງຽວ, ຂ້ຽວກະປອມ, ແມງງອດ ຫລືບໍ່ກໍສັດຮ້າຍ, ມັນຝືນໃຈຂ້ອຍຫລາຍແທ້ໆ, ມື້ໃດຝົນຕົກລິນແດ່, ນ້ຳຖ້ວມຊຸມກໍຈຳເປັນໄດ້ຢືນແຊ່ຈ່ອງຢູ່ກັບນ້ຳເປື້ອນ, ຜະຈົນໄພກັບສັດຮ້າຍ ທີ່ບໍ່ຮູ້ວ່າຈະຖືກມັນທຳລາຍ, ຕອດ, ກັດຍາມໃດ, ຍິນພັດຖິ້ມລະເບີດບໍ່ຮູ້ເຊົາຈັກເທື່ອ ຈົນຖ້ຳໄຫວຍິດໆ, ກ້ອນຫີນ, ຂີ້ດິນຊຸຍ່າວໆຫົວທີ່ຫຍອງ ທີ່ບໍ່ໄດ້ພົ້ນຈ້ຳຂອງຂ້ອຍ ແລະ ນ້ອງກໍຍິ່ງຕື່ມ ແມ່ຢືບຂີ້ດິນໃສ່ ພ້ອມທັງນົບທາຄຸນພະຄຸນເຈົ້າຊ່ວຍຄຸ້ມຄອງໃຫ້ປອດໄພ.

ຈາກນັ້ນມາ ບໍ່ຮອດອາທິດ ກໍມີຄຳສັ່ງຈາກສູນກາງອົບພະຍົບຄອບຄົວພະນັກງານໄປສູ່ເຂດທີ່ໝັ້ນປອດໄພ.

ຕາເວັນລັບລ່ຽມເຂົາແລ້ວແຕ່ F-105 ຂອງສັດຕູ ຍັງເວີ່ນ ແລະ ຖິ້ມລະເບີດຢູ່ບໍ່ເຊົາ ສ່ວນທາງໜ້າດິນກໍຟົດສະໜັ່ນດ້ວຍສຽງປືນປານເຈັ້ຍຫູຊິຂາດ, ທະຫານສັດຕູມັນໄດ້ບຸກຂຶ້ນຕາມຈ້າຍພູເຫັນແສງກະສູນນົບມາບໆ ກົມກອງຂອງພວກຂ້ອຍເຊິ່ງມີແຕ່ຄອບຄົວ, ແມ່ຍິງ, ເດັກນ້ອຍ, ຜູ້ເຖົ້າໄດ້ປະຖິ້ມຖິ່ນຖານບ້ານເກີດເມືອງນອນ, ມູນມັງມໍລະດົກເພື່ອມຸ່ງໜ້າສູ່ເປົ້າໝາຍທາງພາກເໜືອ ຄື: ວຽງໄຊ ແລະ ຫວຽດນາມ (ກົນກວາງ) ອົບພະຍົບຜ່ານຮ່າລູກລະເບີດ, ລູກບົມສານພິດເຄມີ, ຕ້ອງຍ່າງຕີນເປົ່າບຸກຜ່າປ່າພູເຂົາ, ຂຶ້ນພູລົງຫ້ວຍ, ບ່ອນໃດສັດຕູລັດກໍຈຳເປັນໄດ້ຊອກທາງຫລີກ ຫລື ຕ້ອງປະທະກັນ ບາງມື້ເຂົ້າກໍບໍ່ຕົກຮອດທ້ອງພໍເມັດ, ບາງເທື່ອຍິນຖິ້ມລະເບີດຫລາຍ ດັງໄຟຕົ້ມເຂົ້າກໍບໍ່ໄດ້ ຢ້ານຍິນເຫັນຄວັນໄຟ, ກໍຈຳເປັນຕ້ອງໄດ້ກິນເຂົ້າທີ່ໄດ້ຕົ້ມໄວ້ນານແລ້ວຈົນອອກເຫັດ, ສິງສານນ້ອງ

ນ້ອຍຂອງຂ້ອຍທີ່ຍັງບໍ່ທັນຮູ້ຄວາມຫຍັງ ມີແຕ່ແອ່ວກິນເຂົ້າດີ ຄວາມທຸກຍາກລຳບາກພັນລະນາບໍ່ໄດ້. ແຕ່ເຖິງຢ່າງໃດກໍດີ ພໍ່ ແລະ ຜູ້ນຳ ໄດ້ສອນໄວ້ວ່າ: " ໄປນຳການປະຕິວັດ, ເຊື່ອໝັ້ນແນວທາງຂອງລາວອິດສະຫລະ " ແມ່ຈຶ່ງໄດ້ພາພວກຂ້ອຍເດີນໄປນຳການຈັດຕັ້ງ ໄປສູ່ແສງສະຫວ່າງແຫ່ງການປະຕິວັດ.

ມື້ນັ້ນ ເປັນມື້ວັນທີ 29/7/1969 ຂະນະ ຂະບວນອົບພະຍົບຫລົບໄພຢຸດພັກຜ່ອນອາບນ້ຳແຄມຫ້ວຍນ້ຳກວງມ. ທັນໃດ ກໍໄດ້ຍິນສຽງເອີ້ນມາບອກວ່າ: " ເອື້ອຍນວນ ຄະນະກອງບອກໃຫ້ເອື້ອຍໄປພົບດ່ວນ ! " ແລະ ແລ້ວແມ່ກໍຟ້າວເຊັດໂຕໃຫ້ນ້ອງ ພ້ອມທັງຍື່ນເຄື່ອງນຸ່ງ ແລະ ບອກວ່າ: " ລູກນຸ່ງເຄື່ອງໃຫ້ນ້ອງເດີ, ບຶດໜຶ່ງແມ່ມາ... " ພາຍຫລັງນຸ່ງເຄື່ອງໃຫ້ນ້ອງແລ້ວ ຂ້ອຍກໍພານ້ອງທັງສອງໄປນັ່ງລໍຖ້າແມ່ຢູ່ຂ້າງບ້າໂລ້ເຄື່ອງໃນທ່າກຽມພ້ອມອອກເດີນທາງຕໍ່, ສ່ວນມັນສະໝອງດວງນ້ອຍຂອງຂ້ອຍກໍເລີ່ມຄິດເຖິງພໍ່, ປານນີ້ພໍ່ຢູ່ໃສເດ ? ຮູ້ບໍ່ວ່າພວກລູກໄດ້ອົບພະຍົບປະຖິ້ມແຫ່ງນັ້ນກໍເປັນເວລາເກືອບເດືອນແລ້ວ, ລູກຄິດວ່າ ວັນໜ້າໄດ້ພົບພໍ່ບົນເສັ້ນທາງອັນຮີກເຮື້ອຕຶບໜາກາງດົງພົງໄພ, ເບິ່ງແມ້, ຕີນລູກມັນບາດສ້ອຍໄປດ້ວຍເລືອດ ແລະ ໜາມ ຖ້າມີພໍ່ ລູກກໍຄົງຈະມີຜູ້ອູ້ມ, ຜູ້ເຈ່ຍ ແລະ ບ່າລູກຄົງຈະບໍ່ໄດ້ເປ້ເຄື່ອງທີ່ໜັກໜາຢ່າງນີ້ດອກ ແຕ່ຈະເຮັດແນວໃດໄດ້ໃນເມື່ອມີແຕ່... ຂ້ອຍຈຳຕ້ອງອົດທົນຊ່ວຍແມ່ເພາະນ້ອງທັງສອງຍັງນ້ອຍຫລາຍ ທັນໃດຂ້ອຍກໍຕ້ອງຕົກໃຈວາບທີ່ເຫັນສາວແພດປະຈຳກອງໂຈມເພືອແມ່ມາ ພ້ອມທັງເອົາຢາດົມຢັດໃສ່ດັງ ແລະ ລູບຫລັງ ເຊີງໃຫ້ກຳລັງໃຈ, ຂ້ອຍບໍ່ລໍຊ້າ, ຜູດແລ່ນໄປກອດແມ່ ແລະ ຖາມສາເຫດ ປານກັບວ່າຂ້ອຍໂຍນຫອກສຽບແທງໃຈແມ່ໃຫ້ເຈັບຊ້ຳຍິ່ງຂຶ້ນກວ່າເກົ່າ, ແມ່ກອດພວກຂ້ອຍ

ລົ້ມລົງທັບເຫງົ້າໄມ້ໃຫຍ່ ຢ່າງທີ່ຈັ້ງບໍ່ຢູ່, ສຽງໄຫ້ຂອງແມ່ກັບສຽງຄວນຄາງທີ່ບໍ່ເປັນຖ້ອຍຄໍາ ຍ້ອນສຽງສະອື້ນ.

" ອ້າຍສອນເອີຍ, ເຈົ້າປະແມ່ລູກພວກຂ້ອຍເຮັດຫຍັງ, ລູກຕາດໍາໆ ຍັງຄອຍວັນກັບມາຂອງອ້າຍໃຫ້ຄວາມອົບອຸ່ນ ລ້ຽງດູ ແລະ ໃຫ້ອະນາຄົດເຂົາຄືກັບລູກຜູ້ອື່ນໆ... ເປັນຫຍັງ ? ຍ້ອນຫຍັງ ? " ຂ້ອຍກໍຍິ່ງບໍ່ເຂົ້າໃຈວ່າແມ່ນຫຍັງເກີດຂຶ້ນແທ້, ແຕ່ເມື່ອເຫັນພາບຂອງແມ່ ແລ້ວຂ້ອຍກໍອົດທີ່ຈະກັ້ນນໍ້າຕາໄວ້ບໍ່ໄດ້, ຂ້ອຍກໍປ່ອຍໃຫ້ນໍ້າຕາໄຫລຍ້ອຍຕາມພາສາເດັກຂີ້ໂຍ່ຍ.

ແມ່ລູກພວກຂ້ອຍໄດ້ພາກັນໄຫ້ໃສ່ກັນ ເຮັດໃຫ້ກາງພົງໄພອັນເຢືອກເຢັນຍິ່ງປ່ຽວພອຍອ້າງຫວ້າງ ຄືກັບວ່າມັນບໍ່ເຫັນຮູ້ຄວາມຈິງທັງໝົດທີ່ເກີດຂຶ້ນກັບຄອບຄົວພວກຂ້ອຍ ແມ່ດຶງຂ້ອຍມາກອດແໜ້ນ ຕັ້ງສະຕິ ແລະ ເວົ້າຊ້າໆວ່າ: " ລູກເອີຍ ! ພໍ່ໄດ້ຈາກພວກເຮົາໄປໂດຍບໍ່ມີວັນກັບມາອີກແລ້ວ ເພິ່ນເສຍຊີວິດໃນສະໜາມຮົບທີ່ດຸເດືອດສູ້ຮົບກັບສັດຕູ ພໍ່ເສຍສະຫລະຢ່າງມີກຽດສະຫງ່າ ໄດ້ເຮັດຫລ້ອນພາລະກໍາທີ່ຊາດມອບໝາຍໃຫ້, ລູກເປັນເອື້ອຍຈະຕ້ອງໄດ້ຮັບພາລະຊ່ວຍແມ່ ເຖິງແນວໃດ ຄອບຄົວເຮົາກໍຕ້ອງໄປນໍາການປະຕິວັດສູ່ເຂດທີ່ໝັ້ນ ".

ຂ້ອຍບໍ່ຢາກເຊື່ອເລີຍວ່າ " ພໍ່ຕາຍ " ຖ້າເປັນດັ່ງໃນລະຄອນ ພໍ່ຄືງກັບມາ, ຫົວໃຈຂອງຂ້ອຍມັນຊ່າງເຈັບປວດ ເຕັມໄປດ້ວຍຄວາມຄຽດແຄ້ນ ຂ້ອຍພໍຢາກກໍາປືນຫັນໜ້າສູ້ສັດຕູ ເພື່ອລ້າງແຄ້ນໃຫ້ພໍ່ ນັ້ນກໍໄດ້ແຕ່ຄິດ...

ຊຸມພີປ່ານ້າສາວ ແລະ ທຸກຄືນທີ່ເດີນຮ່ວມທາງ ໃພໆກໍມາອ້ອມລ້ອມ ແມ່ພວກຂ້ອຍ ແລະ ທຸກຄືນກໍໄດ້ກົ້ມຫົວໄຫວ້ອາໄລແດ່ດວງວິນຍານຂອງພໍ່ດ້ວຍຄວາມອາໄລອາວອນ.

ຂ້ອຍພະຍາຍາມເຊັດນ້ຳຕາ, ຟາຍຂີ້ມູກ ແລ້ວກໍ່ມຈັບເອົາສາຍບາໂລ້ພາຍໃສ່ບ່າເພື່ອກຽມເດີນທາງຕໍ່ ເໝືອນຜູ້ອື່ນໆ ບັງເອີນກໍຕ້ອງຢຸດສາກ່ອນ, ເພາະມີກອງທະຫານສວນທາງມາ ເບິ່ງຜູ້ໃດກໍຍ່າງຟ້າວຟັ່ງ, ບ່າແບກປືນ ແລະ ອາວຸດ ເບິ່ງຊົງແລ້ວຄືງຈະແມ່ນການສູ້ຮົບດຸເດືອດຫລາຍທີ່ທົ່ງໄຫຫີນ, ນີ້ແມ່ນກອງໜູນຈາກເພື່ອນບ້ານຫວຽດນາມວ່າຊັ້ນ. ທັນໃດກໍໄດ້ຍິນສຽງເອີ້ນເປັນພາສາລາວບໍ່ຄ່ອຍຂອດປານໃດວ່າ:

" ເອື້ອຍນ້ອງ ! "

" ອາວຮຸ່ງ ! " ອາວແລ່ນມາຫາແມ່.

" ນ້ອງເສຍໃຈນຳທີ່ໄດ້ສູນເສຍອ້າຍ ! ອ້າຍຄືພໍ່, ຄືຜູ້ບັນຊາ ຄືເພື່ອນຮ່ວມຮົບຂອງພວກນ້ອງ ".

ເວົ້າແລ້ວ ອາວຍ່າງມາຫາພວກຂ້ອຍ ແລະ ໄດ້ລູບຫົວພ້ອມທັງອູ້ມນ້ອງສາວຫລ້າຂອງຂ້ອຍຂຶ້ນເຊັດຂີ້ມູກ ແລ້ວເວົ້າວ່າ:

" ອາວຟ້າວໄປຕີສັດຕູ ຈຶ່ງບໍ່ມີເຂົ້າໜົມມາຕ້ອນ, ພາຍຫລັງປົດປ່ອຍແລ້ວ ອາວຈະຊື້ເຂົ້າໜົມ, ກະໂປ່ງງາມໆມາຕ້ອນພວກຫລານເດີ້. ພວກຫລານຄຳຮູ້ໄປນຳແມ່ ເມື່ອຮອດປະເທດຫວຽດນາມແລ້ວ ໄປຮຽນໜັງສືຢູ່ຮ່າໂນ້ຍ. ຢູ່ພຸ້ນສັດຕູບໍ່ຖິ້ມລະເບີດ, ຫລານຕ້ອງຕັ້ງໃຈຮ່ຳຮຽນເກັ່ງໆ ເພາະຄວາມປາຖະໜາອັນແຮງກ້າຂອງພໍ່ທີ່ສັ່ງໄວ້ ແມ່ນຢາກໃຫ້ພວກຫລານມີໂອກາດໄດ້ເຂົ້າໂຮງຮຽນ ຖ້າຫລານຮັກພໍ່ແມ່, ຮັກຊາດ ຫລານຕ້ອງຮຽນໃຫ້ເກັ່ງໆ ພວກຫລານຕ້ອງຮັກສາມູນເຊື້ອອັນພິລະອາດຫານຂອງພໍ່, ຂອງບັນພະບຸລຸດລາວ ເມື່ອໃດສັນຕິພາບແລ້ວ, ຖ້າບໍ່ຕາຍອາວຈະກັບໄປຫວຽດນາມຊອກຫາພວກຫລານເດີ້ ເມື່ອນັ້ນອາວຈະພາພວກຫລານໄປຫລິ້ນທະເລ ວີງຮ່າລອງ ໄປທ່ຽວບ້ານເກີດປະທານໂຮ່ຈິ

ມິນ... " ອາວທັງເວົ້າ ທັງຈົກຖົງຢິບຫວີເຂົາຄວາຍນ້ອຍທີ່ເກົ່າໆກ້ານໜຶ່ງໃຫ້ຂ້ອຍ ພ້ອມທັງຈົກຮູບຄອບຄົວອາວຍື່ນໃຫ້ແມ່.

" ເອື້ອຍເອີຍ ! ຖ້າໄປຮອດແຫ້ງຮວາ, ໃຫ້ເອື້ອຍຊອກຫາຄອບຄົວນ້ອງແນ່ເດີ້ ".

ຈາກນັ້ນ ພວກຂ້ອຍກໍຫັນຫລັງໃສ່ກັນ ເດີນຄົນລະທິດ, ຂ້ອຍໄດ້ແຕ່ແນມນຳຫລັງອາວ ແລ່ນຕາມກົ້ນແຖວກອງຮ້ອຍຈົນລັບເງົາຕົ້ນໄມ້.

ໃນທີ່ສຸດ ການເດີນທາງຂອງຄອບຄົວພະນັກງານຂອງພວກຂ້ອຍກໍໄປເຖິງຊາຍແດນຫວຽດນາມ ຫລື ເວົ້າໄດ້ວ່າເຖິງເຂດທີ່ໝັ້ນ. ຂ້ອຍເອງກໍໄດ້ມີໂອກາດໄປຮໍ່າຮຽນຢູ່ແຫ້ງຮວາ ທ່າມກາງສົງຄາມ ໂຮງຮຽນກໍຖືກລະເບີດຖິ້ມໃສ່, ດັ່ງນັ້ນ ເພື່ອຄວາມປອດໄພ ອຳນວຍການໂຮງຮຽນຈຶ່ງຈັດສົ່ງນັກຮຽນລາວພວກຂ້ອຍໄປອາໄສຫລົບໄພນຳຊາວບ້ານ ຄອບຄົວລະ 1-2 ຄົນ ເມື່ອເຖິງຕອນນີ້ຂ້ອຍໄດ້ມີແມ່ຮັກພໍ່ຮັກຫວຽດ, ທີ່ໃຫ້ຄວາມຮັກໄຄ່ເໝືອນພໍ່ແມ່ຄືງ.

ເມື່ອປະເທດຊາດໄດ້ຮັບການປົດປ່ອຍ ຂ້ອຍກໍມີໂອກາດກັບຄືນບ້ານເກີດເມືອງນອນ, ເຊິ່ງເຕັມໄປດ້ວຍບາດແຜສົງຄາມ, ຂຸມບົ່ມ, ລູກບົ່ມບີ້ທີ່ຍັງບໍ່ທັນແຕກ ຢັ່ງຢາຍ ເກືອບວ່າບໍ່ມີບ່ອນຈະປ່ອນຕີນເທິງພູພຽງຊຽງຂວາງ.

✦✦✦✦✦✦✦✦✦

ຊາວກວ່າປີຜ່ານໄປ, ຖ້າຂ້ອຍຈຳບໍ່ຜິດ ຄືງແມ່ນປີ 1993, ມີຍາດພີ່ນ້ອງ ແລະ ການຈັດຕັ້ງອ້າຍນ້ອງເພື່ອນເຂົ້າມາຊອກຄົ້ນກະດູກຂອງລູກຫລານ, ຍາດພີ່ນ້ອງຂອງຕົນທີ່ເສຍຊີວິດໃນຍາມ

ສົງຄາມຝັງຢູ່ດິນລາວ, ຂ້ອຍມີໂອກາດໄປເຖິງບ່ອນທີ່ເຄີຍຢູ່ ແລະ ໄດ້ພົບອຳນາດການປົກຄອງບ້ານ, ເພິ່ນບອກວ່າ:

" ອາທິດແລ້ວນີ້ ກໍມີຍາດຂອງສະຫາຍເພື່ອນບ້ານຫວຽດນາມມາພົວພັນຂຸດອັດຖິໄປທຳບຸນທີ່ແທ້ງຮວາ " ຂ້ອຍສະເດີດຕື່ນ ແລະ ກໍຢ້ຳຄຳຖາມຄືນນຳລຸງນາຍບ້ານວ່າ:

" ຊື່ແນວໃດເບາະລຸງ ? ຜູ້ທີ່ມີຍາດມາເກັບກະດູກ " ລຸງຈົກເອົາເຈ້ຍເອກະສານຂຶ້ນມາອ່ານຊື່ຊ້າໆວ່າ: ຮ້ອຍເອກ ເລວັນຮຸ່ງ ! ບໍ່ແນ່ໃຈຂ້ອຍຈຶ່ງຖາມຕື່ມວ່າ:

" ລຸງມີຮູບລາວຕິດຄັດມາພ້ອມບໍ່ ? ຫລານຂໍເບິ່ງແດ່ ".

" ເອີ້ ! ນີ້ເດຮູບລາວ,ເປັນຄົນເຈົ້າຊູ້ສົມຄວນ ແຕ່ໜ້າເສຍດາຍມາຕາຍຢູ່ສົງຄາມບ້ານເຮົາ ".

ລຸງທັງເວົ້າ ທັງຍື່ນຮູບໃຫ້ຂ້ອຍຈັບມາເບິ່ງ ໂອ້ຍ ! ໂລດແມ່ນອາວຮຸ່ງຂອງຂ້ອຍແທ້ໆ ອາວເອີຍ ! ມື້ນີ້ພວກຫລານໄດ້ດຳລົງຊີວິດຢູ່ໃຕ້ທ້ອງຟ້າສີຄາມ ເປັນອິດສະຫລະພາບ, ໄດ້ຫາຍໃຈເອົາອາກາດອັນສົດໃສ, ໄດ້ກິນອີ່ມ, ນຸ່ງອຸ່ນ, ໄດ້ມີໂອກາດເຫັນສັນຕິພາບທັງໝົດເຫລົ່ານັ້ນ ຍ້ອນການແລກດ້ວຍຊີວິດ, ເລືອດເນື້ອ, ເຫື່ອໄຄຂອງພໍ່ ກໍຄືອາວ.

ຫລານຄົງບໍ່ມີໂອກາດໄດ້ໃສ່ກະໂປ່ງຜືນງາມໆ ທີ່ອາວຈະຊື້ໃຫ້ອີກແລ້ວ ແລະ ກໍຄົງບໍ່ມີໂອກາດໄດ້ໄປທ່ຽວບ້ານລຸງໂຮ່, ໄປທ່ຽວທະເລ ໂດຍແມ່ນອາວພາທາງອີກແລ້ວ.

ຮອດມື້ນີ້ ຂ້ອຍກໍຄືປະຊາຊົນລາວ ບໍ່ມີວັນຈະລືມບຸນຄຸນຂອງກອງທັບ ແລະ ປະຊາຊົນຫວຽດນາມ ແລະ ຍ້ອນສົງຄາມອັນປ່າເຖື່ອນນີ້ ມັນຈຶ່ງປຸ້ນເອົາຄວາມສຸກ, ຄວາມອົບອຸ່ນ ຄວາມຫວັງຄອບຄົວຂອງຂ້ອຍ, ປ່ອຍໃຫ້ຊີວິດຂອງພວກຂ້ອຍກາຍເປັນກຳພ້າແຕ່ເຍົາໄວ...

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ